**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 27 /ຈທວ

ນະຄອນຫຼວງວຽງຈັນ, ວັນທີ 16 ກຸມພາ 2022

# ແຈ້ງການ

**ເຖິງ: ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ**

**ເລື່ອງ: ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວຂອງວິສາຫະກິດ ຈຳນວນ 2 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ ກະຊວງການເງິນ**

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເລກທີ 210/ຈທວ, ລົງວັນທີ 18 ສິງຫາ 2021;
- ອີງຕາມ ໜັງສືສະເໜີຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 0377/ກສອ, ລົງວັນທີ 8 ກຸມພາ 2022.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຂອງວິສາຫະກິດ ຈຳນວນ 2 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 0377/ກສອ, ລົງວັນທີ 8 ກຸມພາ 2022. ເຮັດໃຫ້ວິສາຫະກິດດັ່ງກ່າວສາມາດສືບຕໍ່ເຄື່ອນໄຫວໄດ້ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ນັບແຕ່ວັນທີ່ອອກແຈ້ງການສະບັບນີ້ເປັນຕົ້ນໄປ;
2. ສຳລັບ ວິສາຫະກິດ ທີ່ຍັງຖືກມາດຕະການ ຕາມໜັງສືແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ສະບັບເລກທີ 210/ຈທວ ລົງວັນທີ 18 ສິງຫາ 2021 ແມ່ນໃຫ້ສືບຕໍ່ເຂົ້າໄປພົວພັນກັບເຈົ້າໜ້າທີ່ສ່ວຍສາອາກອນ, ກົມສ່ວຍສາອາກອນ, ກະຊວງການເງິນ **ກ່ອນວັນທີ 25 ເມສາ 2022** ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງສ່ວຍສາອາກອນ. ຖ້າຫາກ ກາຍກຳນົດເວລາຂ້າງເທິງນີ້ ວິສາຫະກິດດັ່ງກ່າວ ຈະຖືກພິຈາລະນາແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ;
3. ຈຳນວນ ວິສາຫະກິດທີ່ສືບຕໍ່ໂຈະ ແລະ ຍົກເລີກໂຈະ ການເຄື່ອນໄຫວທຸລະກິດຊົ່ວຄາວ ມີດັ່ງນີ້:

| ຈຳນວນແຈ້ງໂຈະຊົ່ວຄາວທັງໝົດ | ຍົກເລີກຜ່ານມາ | ຍົກເລີກຄັ້ງນີ້ | ຈຳນວນທີ່ຍັງເຫຼືອປັດຈຸບັນ |
|---|---|---|---|
| 210 ຫົວໜ່ວຍ | 51 ຫົວໜ່ວຍ | 2 ຫົວໜ່ວຍ | 157 ຫົວໜ່ວຍ |

ນອກນີ້ທ່ານຍັງສາມາດກວດສອບ ໄດ້ຕາມຄິວອາໂຄດ (QR Code) ຄັດຕິດແຈ້ງການສະບັບນີ້ ຫຼື ໂດຍຜ່ານເວັບໄຊ້ WWW.NED.MOIC.GOV.LA ຫຼື Facebook ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ.

210 ສືບຕໍ່ 14-2-
(ສືບຕໍ່ໂຈະຊົ່ວຄາວ)

210 ຍົກເລີກ 14-2-2022
(ຍົກເລີກໂຈະຊົ່ວຄາວ)

**ເຈົ້າໜ້າທີ່ທະບຽນວິສາຫະກິດ**

**ອະພິສິດ ແສງສຸລິວົງ**

ບ່ອນສົ່ງ:

- ກົມສ່ວຍສາອາກອນ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ 1 ສະບັບ;
- ວິສາຫະກິດທີ່ກ່ຽວຂ້ອງ 1 ສະບັບ;
- ສຳເນົາ 1 ສະບັບ.

สแกนด้วย CamScanner